<ຂໍ້ມູນກ່ຽວກັບປະຕິກິລິຍາຕ້ານລົບ ຫຼັງຈາກການສັກຢາປ້ອງກັນ> (라오스어)

## ໃນກໍລະນີດັ່ງກ່າວນີ້, ແນະນໍາໃຫ້ປະຕິບັດດັ່ງນ.◌ີ◌້

ຖ້າທ່ານມີອາການໃຄ່ບວມຫຼືເຈັບຢູ່ບໍລິເວນສັກຢາວັກຊີນ ຫຼັງຈາກທີ່ໄດ້ສັກຢາວັກຊີນແລ້ວ, ໃຫ້ນໍາເອົາຜ້າເຊັດໜ້າທີ່ແຫ້ງແລະ
ສະອາດ ມາປົກບໍລິເວນສັກຢາ ແລ້ວໃຊ້ຜ້າແຊ່ເຢັນມາປົກເທິງ.

ຖ້າທ່ານມີອາການໄຂ້ເຫຼັກໜ້ອຍ ຫລັງຈາກການສັກຢາແລ້ວ, ໃຫ້ດື່ມນໍ້າຫຼາຍໆແລະພັກຜ່ອນ.

ຖ້າທ່ານຮູ້ສຶກບໍ່ສະບາຍກັບອາການໄຂ້ຫລືເຈັບຕາມກ້າມເນື້ອຫຼັງຈາກການສັກຢາແລ້ວ, ທ່ານສາມາດຮັບປະທານຢາແກ້ໄຂ້ແລະຢາແກ້ປວດໄດ.◌້

* ກ່ອນການສັກຢາປ້ອງກັນ, ໃຫ້ກະກຽມຢາແກ້ໄຂ້ / ຢາແກ້ປວດທີ່ມີສ່ວນປະສົມ ອາເຊຕາມີໂນເຟນ, ແລະຖ້າທ່ານມີອາການເຈັບຕາມຮ່າງ
ກາຍຫລັງຈາກສັກຢາ, ໃຫ້ຮັບປະທານຢາແກ້ໄຂ/◌້ ຢາແກ້ປວດ.

## ໃນກໍລະນີດັ່ງກ່າວນີ້, ໃຫ້ໄປຫາທ່ານໝໍ.

ຖ້າມີອາການໃຄ່ບວມ, ເຈັບແລະຜື່ນແດງຢູ່ບໍລິເວນສັກ 48 ຊົ່ວໂມງຫຼັງ ຈາກສັກຢາ.
ຢາ ແລະ ບໍ່ມີອາການດີຂຶ້ນນານເຖິງ

ຖ້າມີອາການເຊັ່ນ: ຫາຍໃຈຍາກ, ປວດໜ້າເອິກ, ເຈັບທ້ອງຢ່າງຕໍ່ເນື່ອງແລະມີອາການບວມທີ່ຂາ ເກີດຂຶ້ນພາຍໃນ 4 ອາທິດຫລັງຈາກສັກຢາ
ປ້ອງກັນ.

ເຈັບຫົວຮຸນແຮງຕໍ່ເນື່ອງເປັນເວລາຫຼາຍກວ່າ 2 ວັນຫລັງຈາກສັກຢາໃຊ້ຢາແກ້ປວດແລ້ວແຕ່ບໍ່ໄດ້ຜົນ, ບໍ່ສາມາດຄວບຄຸມຕົນເອັງ, ຫລືມົວຕາ.

ໃນກໍລະນີທີ່ສູນເສຍກໍາລັງແຮງ ຫຼືມີອາການທີ່ບໍ່ປົກກະຕິ ນອກເໜືອຈາກອາການ ທໍາມະດາທົ່ວໄປຫຼັງຈາກສັກຢາ.

ໃນກໍລະນີທີ່ມີການບວມຫລືມີເລືອດອອກຢູ່ບ່ອນອື່ນ ນອກຈາກບໍລິເວນທີ່ສັກຢາ ຫລັງການສັກຢາແລ້ວ.

## ໃນກໍລະນີດັ່ງນີ້, ໃຫ້ໂທຫາ 119 ຫຼືໄປທີ່ຫ້ອງສຸກເສີນ.

. ຫາຍໃຈຍາກ ຫວ◌ູ◌ື ◌ິນຫົວຢ່າງຮຸນແຮງ ຫຼັງຈາກສັກຢາ.
. ອາການໃຄ່ບວມຢູ່ຮີມສົບ ຫລືຕາມໃບໜ້າ ຫລືມີອາການເປັນຜື່ນເກີດຂຶ້ນຢ່າງຮຸນແຮງທົ່ວຮ່າງກາຍ ຫລັງຈາກການສັກຢາ.
. ໝົດສະຕິ ກະທັນຫັນ ຫຼື ລົ້ມລົງຫຼັງຈາກສັກຢາ.

<ການແປພາສານີ້ໄດ້ເຮັດຢູ່ທີ່ສູນກາງໂທລະສັບ ດານູຣີ 1577-1366>


2021.04.12.
질병관리청
KMA 대한의사협회
예방접종 후
이상반응에 대한 안내
이럴 땐, 이렇게 하세요.
· 접종 후 접종부위 부기·통증이 있는 경우,
깨끗한 마른 수건을 대고 그 위에 냉찜질을 하세요.
· 접종 후 미열이 있는 경우, 수분을 충분히 섭취하고 휴식을 취하세요.
· 접종 후 발열, 근육통 등으로 불편할 경우, 해열·진통제를 복용하시면 도움이 됩니다.
이럴 땐, 의사 진료를 받으세요.
· 접종 후 접종부위 부기, 통증, 발적이 48시간이 지나도 호전되지 않는 경우
· 접종 후 4주 내 호흡곤란, 흉통, 지속적인 복부 통증, 다리 부기와 같은 증상이 나타난 경우
· 접종 후 심한 또는 2일 이상의 지속적인 두통이 발생하며,
진통제에 반응하지 않거나 조절 되지 않는 경우 또는 시야가 흐려지는 경우
· 접종 후 갑자기 기운이 떨어지거나 평소와 다른 이상 증상이 나타난 경우
· 접종 후 접종부위가 아닌 곳에서 멍이나 출혈이 생긴 경우
119
이럴 땐, 119에 신고 또는
응급실을 방문하세요.
· 접종 후 숨쉬기 곤란하거나 심하게 어지러운 경우
· 접종 후 입술, 얼굴이 붓거나 온몸에 심한 두드러기 증상이 나타나는 경우
· 접종 후 갑자기 의식이 없거나 쓰러진 경우